ບົດຮຽນ 2

# ໃຜເປັນພະຜູ້ສ້າງ?

*ໃຜເປັນພະຜູ້ສ້າງ ແລະພະອົງມີຊື່ຫຍັງ? (1, 2)*

*ພະອົງມີກາຍຊະນິດໃດ? (3)*

*ລັກສະນະເດັ່ນຂອງພະອົງມີຫຍັງແດ່? (4)*

*ເຮົາຄວນໃຊ້ຮູບປັ້ນແລະເຄື່ອງໝາຍຕ່າງໆ ໃນການນະມັດສະການພະອົງບໍ? (5)*

*ມີສອງແນວທາງອັນໃດທີ່ເຮົາສາມາດຮຽນຮູ້ກ່ຽວກັບພະຜູ້ສ້າງໄດ້? (6)*



1. ຜູ້ຄົນນະມັດສະການຫລາຍສິ່ງຫລາຍຢ່າງ. ແຕ່ຄຳພີໄບເບິນບອກເຮົາວ່າມີພະເຈົ້າ**ທ່ຽງແທ້**ອົງດຽວເທົ່ານັ້ນ. ພະອົງໄດ້ສ້າງສາລະພັດທຸກສິ່ງໃນສະຫວັນແລະເທິງແຜ່ນດິນໂລກ. ເນື່ອງຈາກພະອົງໄດ້ປະທານຊີວິດແກ່ເຮົາ ພະອົງຈຶ່ງເປັນຜູ້ດຽວເທົ່ານັ້ນທີ່ເຮົາຄວນນະມັດສະການ.—1 ໂກລິນໂທ 8:5, 6; ຄຳປາກົດ 4:11.

2. ພະຜູ້ສ້າງມີຫລາຍຕຳແຫນ່ງແຕ່ວ່າພະອົງມີຊື່ດຽວເທົ່ານັ້ນ. ຊື່ຂອງພະອົງຄື**ເຢໂຫວາ**. ໃນຄຳພີໄບເບິນສ່ວນຫລາຍ ຊື່ຂອງພະຜູ້ສ້າງໄດ້ຖືກລຶບອອກແລະໄດ້ໃສ່ຕຳແຫນ່ງ**ອົງພະຜູ້ເປັນເຈົ້າ**ຫລືພະເຈົ້າລົງໄປແທນ. ແຕ່ເມື່ອຄຳພີໄບເບິນໄດ້ຮັບການຂຽນຂຶ້ນ ຊື່ເຢໂຫວາໄດ້ປາກົດໃນຄຳພີໄບເບິນປະມານ 7,000 ເທື່ອ!—ອຸປະຍົກຫານີ 3:15; ຄຳເພງ 83:18.

3. ພະເຢໂຫວາມີຮ່າງກາຍ ແຕ່ບໍ່ຄືກັນກັບຮ່າງກາຍຂອງເຮົາ. ຄຳພີໄບເບິນກ່າວວ່າ: "ພະເຈົ້າເປັນວິນຍານ." (ໂຢຮັນ 4:24) ກາຍວິນຍານເປັນຊີວິດແບບຫນຶ່ງທີ່ສູງກວ່າກາຍຂອງມະນຸດເຮົາມາກຫລາຍ. ບໍ່ມີມະນຸດຄົນໃດເຄີຍເຫັນພະຜູ້ສ້າງເລີຍ. ພະເຢໂຫວາປະທັບຢູ່ໃນສະ

ຫວັນ ແຕ່ພະອົງສາມາດເຫັນສາລະພັດທຸກສິ່ງໄດ້. (ຄຳເພງ 11:4, 5; ໂຢຮັນ 1:18) ແຕ່ພະວິນຍານບໍລິສຸດຄືຫຍັງ? ພະວິນຍານບໍລິສຸດບໍ່ແມ່ນເປັນບຸກຄົນເຫມືອນພະເຈົ້າ. ແຕ່ເປັນພະລັງປະຕິບັດການຂອງພະເຈົ້າ.—ຄຳເພງ 104:30.

4. ຄຳພີໄບເບິນເປີດເຜີຍໃຫ້ເຮົາຮູ້ເຖິງບຸກຄະລິກລັກສະນະຂອງພະເຢໂຫວາ. ຄຳພີໄບເບິນສະແດງໃຫ້ເຫັນວ່າຄຸນລັກສະນະເດັ່ນຂອງພະອົງຄືຄວາມຮັກ ຄວາມຍຸຕິທຳ ສະຕິປັນຍາ ແລະອຳນາດ. (ພະບັນຍັດຕິທີ2 32:4; ໂຢບ 12:13; ເອຊາອີ 40:26; 1 ໂຢຮັນ 4:8) ຄຳພີໄບເບິນບອກເຮົາອີກວ່າພະອົງມີຄວາມກະລຸນາ ຄວາມເມດຕາ ໃຫ້ອະໄພ ມີຄວາມເອື້ອເຟື້ອອາລີ ແລະມີຄວາມອົດທົນ. ພວກເຮົາທີ່ເຊື່ອຟັງຄວນພະຍາຍາມລຽນແບບຢ່າງພະອົງຄືບຸດທີ່ເຊື່ອຟັງ.—ເອເຟດ 5:1, 2.

5. ໃນການນະມັດສະການຂອງເຮົາ ເຮົາຄວນຈະກົ້ມຂາບລົງຫລືອະທິດຖານຕໍ່ຮູບປັ້ນ ຮູບພາບ ຫລືເຄື່ອງຫມາຍຕ່າງໆ ບໍ? ບໍ່! (ອົບພະຍົກຫນີ 20:4, 5) ພະເຢໂຫວາກ່າວວ່າເຮົາຕ້ອງນະມັດສະການພະອົງແຕ່ອົງດຽວເທົ່ານັ້ນ. ພະອົງຈະບໍ່ແບ່ງປັນສະຫງ່າລາສີຂອງພະອົງໃຫ້ແກ່ຜູ້ໃດຫລືສິ່ງໃດເລີຍ. ຮູບປັ້ນບໍ່ມີອຳນາດຊ່ວຍເຮົາໄດ້.—ຄຳເພງ 115:4-8; ເອຊາອີ 42:8.

6. ເຮົາຈະຮູ້ຈັກພະຜູ້ສ້າງໃຫ້ດີຂຶ້ນໄດ້ຢ່າງໃດ? ວິທີທາງຫນຶ່ງກໍຄືດ້ວຍການສັງເກດເບິ່ງສິ່ງຕ່າງໆ ທີ່ພະອົງໄດ້ສ້າງແລະການຄິດໃຫ້ເລິກເຊິ່ງວ່າສິ່ງເຫລົ່ານັ້ນບອກສິ່ງໃດໃຫ້ເຮົາຊາບ. ສິ່ງຕ່າງໆ ທີ່ພະເຈົ້າສ້າງສະແດງໃຫ້ເຮົາຮູ້ວ່າພະອົງມີລິດອຳນາດແລະສະຕິປັນຍາອັນຍິ່ງໃຫຍ່. ເຮົາເຫັນເຖິງຄວາມຮັກຂອງພະອົງໃນສັບພະສິ່ງທີ່ພະອົງໄດ້ສ້າງ. (ຄຳເພງ 19:1-6; ໂລມ 1:20) ອີກວິທີຫນຶ່ງທີ່ເຮົາສາມາດຮຽນຮູ້ກ່ຽວກັບພະຜູ້ສ້າງໄດ້ຄືດ້ວຍການສຶກສາຄຳພີໄບເບິນ. ໃນຄຳພີໄບເບິນພະອົງບອກເຮົາອີກຫລາຍສິ່ງໃນເລື່ອງທີ່ວ່າພະອົງເປັນພະເຈົ້າຊະນິດໃດ. ນອກຈາກນີ້ ພະອົງບອກເຮົາກ່ຽວກັບພະປະສົງຂອງພະອົງແລະສິ່ງທີ່ພະອົງຕ້ອງການໃຫ້ເຮົາເຮັດ.—ອາໂມດ 3:7; 2 ຕີໂມເຕ 3:16, 17.



***ເຮົາຮຽນຮູ້ກ່ຽວກັບພະຜູ້ສ້າງຈາກສິ່ງທີ່ພະອົງໄດ້ສ້າງ ແລະຈາກຄຳພີໄບເບິນ***